ວາລະສານ

# ກະສິກຳ ແລະ ປ່າໄມ້

ປະຈຳ ອາທິດວັນທີ 04 ຫາ 08 ພະຈິກ 2024




ພິທີລົງນາມ ໃນສັນຍາການຮ່ວມມື MOA ໂຄງການ ຜະລິດ ແລະ ຈຳໜ່າຍ ຢາສັດຕະວະແພດ ໃນ ສປປ ລາວ

ຫ້ອງການກະຊວງກະສິກຳ ແລະ ປ່າໄມ້




# ພິທີລົງນາມ ໃນສັນຍາການຮ່ວມມື MOA ໂຄງການ ຜະລິດ ແລະ ຈຳໜ່າຍ ຢາສັດຕະວະແພດ ໃນລາວ

ພາບ-ຂ່າວໂດຍ: ພະແນກໂຄສະນາ ແລະ ຂ່າວສານ

ຢາປົວພະຍາດສັດ ແມ່ນວັດຖຸສຳຄັນ ທີ່ຈະຊ່ວຍຮັບປະກັນການພັດທະນາທີ່ດີຂອງອຸດສາຫະກຳການລ້ຽງສັດ ແລະ ຍັງເປັນຕົວເຊື່ອມໂຍງສຳຄັນໃນການຮັກສາຄວາມປອດໄພ ຂອງການດູແລຮັກສາສຸຂະພາບສັດ ຍ້ອນເຫັນໄດ້ເຖິງຄວາມສຳຄັນດັ່ງກ່າວ, ໃນວັນທີ 04 ພະຈິກ 2024 ທີ່ສູນຜະລິດຢາສັດຕະວະແພດ ຈຶ່ງໄດ້ມີພິທີລົງນາມໃນສັນຍາການຮ່ວມມື MOA ໂຄງການຜະລິດ ແລະ ຈຳໜ່າຍຢາສັດຕະວະແພດໃນລາວ ລະຫວ່າງກົມລ້ຽງສັດ ແລະ ການປະມົງ ກະຊວງກະສິກຳ ແລະ ປ່າໄມ້ ຮ່ວມກັບບໍລິສັດ ກວາງຊີຈົ້ງນຫຼົງ ຢາປິ່ນປົວສັດ ຈຳກັດ ຂຶ້ນ, ເຊິ່ງຈຸດປະສົງການເຊັນສັນຍາຮ່ວມມື ໃນຄັ້ງນີ້ ແມ່ນເພື່ອຮ່ວມກັນສ້າງຕັ້ງວິສາຫະກິດຜະລິດຢາສັດຕະວະແພດມາດຕະຖານ GMP ແຫ່ງທຳອິດຂອງ ສປປ ລາວ, ການສ້າງລະບົບການຜະລິດ, ກວດກາ, ກັກກັນ ແລະ ຢັ້ງຢືນມາດຕະຖານຢາສັດຕະວະແພດ ແບບຄົບວົງຈອນ, ຍົກລະດັບຄວາມຮູ້ ແລະ ຄວາມສາມາດທາງດ້ານວິຊາຊີບຂອງພະນັກງານວິຊາການ, ຜູ້ຜະລິດ ແລະ ພາກສ່ວນທີ່ກ່ຽວຂ້ອງ ເພື່ອເປີດກວ້າງອອກສູ່ຕະຫຼາດອາຊຽນ, ໂດຍໄລຍະເວລາຂອງການຮ່ວມມືແມ່ນ 30 ປີ, ເລີ່ມແຕ່ວັນທີ 11 ຕຸລາ 2024 ຫາວັນທີ 11 ຕຸລາ 2054 ມີເນື້ອທີ່ຈັດຕັ້ງປະຕິບັດ 1.5 ເຮັກຕາ ແລະ ທຶນສະໜອງ 5,000,000 ໂດລາສະຫະລັດ, ໃນພິທີເຊັນສັນຍາ

ການຮ່ວມມືຄັ້ງນີ້ ຕາງໜ້າ ເຊັ່ນໂດຍ ທ່ານ ປອ. ກາວິພອນ ພຸດທະວົງ ຫົວໜ້າກົມລ້ຽງສັດ ແລະ ການປະມົງ, ທ່ານ ປອ. ບຸນເດດ ສຸດທະວີໄລ ຫົວໜ້າກົມແຜນການ ແລະ ການຮ່ວມມື ກະຊວງກະສິກໍາ ແລະ ປ່າໄມ້ ແລະ ຝ່າຍບໍລິສັດເຊັ່ນໂດຍ ທ່ານ ໂຈ ຊື່ສຽງ ປະທານບໍລິສັດກວາງຊີ ຈົ້ງນຫຼົງຢາສັດຕະວະແພດ ຈໍາກັດ ໂດຍເປັນກຽດເຂົ້າຮ່ວມເປັນປະທານ ແລະ ສັກຂີພິຍານຂອງ ທ່ານ ກິແກ້ວ ສິງນາວົງ ຮອງລັດຖະມົນຕີກະຊວງກະສິກໍາ ແລະ ປ່າໄມ້, ພ້ອມດ້ວຍ ຫົວໜ້າຫ້ອງການ, ຫົວໜ້າ-ຮອງຫົວໜ້າກົມ, ປະທານສະພາການຄ້າແຂວງກວາງຊີ ປະຈໍາລາວ ພ້ອມດ້ວຍແຂກຖືກເຊີນ ແລະ ພາກສ່ວນກ່ຽວຂ້ອງເຂົ້າຮ່ວມ.




ຄະນະຮັບຜິດຊອບ:
ທ່ານ ສີປະໄພ ໄຊສິງຄານ
ທ່ານ ສີສະຫວາດ ຫອມດາລາ

ບັນນາທິການ:
ທ່ານ ກິດຊະນະ ພົມມະຈັນ
ທ່ານ ໂຊລາ ສົມມະລາວົງ
ທ່ານ ນ. ທອງພຸດ ວົງພະຈັນ
ທ່ານ ນ. ຄໍາແພງ ເກສອນ

ຈັດໜ້າອອກແບບໂດຍ:
ທ່ານ ນ. ສີອໍານອນ ໄຊຍະລາດ

ຕິດຕໍ່ ແລະ ລົງໂຄສະນາໄດ້ທີ່: ພະແນກໂຄສະນາ ແລະ ຂ່າວສານ, ຫ້ອງການກະຊວງ 021 410154;
website: www.maf.gov.la;
Facebook: ຂ່າວສານກະສິກໍາ, ປ່າໄມ້ ແລະ ພັດທະນາຊົນນະບົດ;
Youtube: ລາຍການກະສິກໍາ;ແລະ ປ່າໄມ້;